ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 09 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 3.3.2014

# ຄໍາສັ່ງ
## ວ່າດ້ວຍການຫ້າມຫັນປ່ຽນ
## ທີ່ດິນເຂດຊົນລະປະທານ ປະຕູນໍ້າປ່ອງ 3 ຕາມຄອງລະບາຍ
## ເຂື່ອນໄຟຟ້ານໍ້າຕົກ ນໍ້າເທີນ 2, ເມືອງຍົມມະລາດ, ແຂວງຄໍາມ່ວນ ໄປເປັນທີ່ດິນປະເພດອື່ນ

ເຖິງ:
- ທ່ານລັດຖະມົນຕີວ່າການ ກະຊວງ ກະສິກໍາ ແລະ ປ່າໄມ້,
- ທ່ານລັດຖະມົນຕີວ່າການ ກະຊວງ ອຸດສາຫະກໍາ ແລະ ການຄ້າ,
- ທ່ານລັດຖະມົນຕີວ່າການ ກະຊວງ ການເງິນ,
- ທ່ານລັດຖະມົນຕີວ່າການ ກະຊວງ ແຜນການ ແລະ ການລົງທຶນ,
- ທ່ານລັດຖະມົນຕີວ່າການ ກະຊວງ ພະລັງງານ ແລະ ບໍ່ແຮ່,
- ທ່ານລັດຖະມົນຕີວ່າການ ກະຊວງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ,
- ທ່ານລັດຖະມົນຕີວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ,
- ທ່ານລັດຖະມົນຕີວ່າການ ກະຊວງ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ,
- ທ່ານຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ,
- ທ່ານເຈົ້າແຂວງ ຄໍາມ່ວນ,

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003,
- ອີງຕາມ ກົດໝາຍວ່າດ້ວຍຊົນລະປະທານ ເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012,
- ອີງຕາມ ໜັງສືສະເໜີຂອງ ກະຊວງກະສິກໍາ ແລະ ປ່າໄມ້ ເລກທີ 0164/ກປ, ລົງວັນທີ 17 ກຸມພາ 2014,

ໂດຍຈັດຕັ້ງປະຕິບັດຕາມ ມະຕິຕົກລົງ ຂອງລັດຖະບານ ທີ່ໄດ້ເລືອກເອົາແຂວງຄໍາມ່ວນ ແລະ ແຂວງສະຫວັນນະເຂດ ເປັນເຂດຈຸດສຸມໃນການຜະລິດກະສິກໍາ ເພື່ອຄໍ້າປະກັນສະບຽງອາຫານ ແລະ ສົ່ງເສີມການຜະລິດເປັນສິນຄ້າ ໂດຍມີການລິເລີ່ມຈາກເຂດໂຄງການຊົນລະປະທານ ຢູ່ເມືອງຈຸດສຸມ ທີ່ມີທ່າແຮງ, ມີເງື່ອນໄຂເໝາະສົມ ເພື່ອພັດທະນາຊົນລະກະເສດ ທີ່ມີລັກສະນະຄົບຊຸດ, ຮັບປະກັນການຍົກສູງປະສິດທິຜົນ ແລະ ມີຄວາມຍືນຍົງ.

ເພື່ອຜັນຂະຫຍາຍເນື້ອໃນຈິດໃຈດັ່ງກ່າວ, ລັດຖະບານ ໄດ້ຕົກລົງເລືອກເອົາ ໂຄງການຊົນລະປະທານ ປະຕູນໍ້າປ່ອງທີ 3 ຕາມຄອງລະບາຍ ເຂື່ອນໄຟຟ້ານໍ້າຕົກ ນໍ້າເທີນ 2, ເມືອງຍົມມະລາດ, ແຂວງຄໍາມ່ວນ ເປັນໂຄງການຈຸດສຸມໜຶ່ງ ທີ່ລັດຖະບານ ໄດ້ບັນຈຸເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VII (2011-2015) ແລະ ໄດ້ອະນຸມັດໃຫ້ກໍ່ສ້າງລະບົບຊົນລະປະທານ ເພື່ອສະໜອງນໍ້າແບບໄຫຼເອງ ໃຫ້ແກ່ເນື້ອທີ່ຜະລິດກະສິກໍາ ທັງລະ ດູແລ້ງ

ແລະ ລະດູຝົນ ເຊິ່ງຖືເອົາໂຄງການນີ້ ເປັນໂຄງການລິເລີ່ມທົດລອງແບບໃສ່ສ້າງໃຫ້ເປັນຕົວແບບ ແລະ ຜັນຂະຫຍາຍໄປສູ່ເຂດໂຄງການອື່ນໆ ທີ່ມີເງື່ອນໄຂ.

ນາຍົກລັດຖະມົນຕີ ອອກຄໍາສັ່ງ:

1. ຫ້າມຫັນປ່ຽນທີ່ດິນເຂດຊົນລະປະທານ ປະຕູນໍ້າປ່ອງທີ 3 ຕາມຄອງລະບາຍເຂື່ອນໄຟຟ້ານໍ້າເທີນ ນໍ້າເທີນ 2, ເມືອງຍົມມະລາດ, ແຂວງຄໍາມ່ວນ ຊຶ່ງມີເນື້ອທີ່ຈໍານວນ 2.700 ເຮັກຕາ ໄປເປັນດິນປະເພດອື່ນ ແລະ ບໍ່ອະນຸຍາດ ໃຫ້ຈັດສັນແຜນຜັງລວມຂອງເທດສະບານເມືອງ ຫຼື ກິດຈະກໍາອື່ນໆ ທີ່ບໍ່ແມ່ນການຜະລິດກະສິກໍາ ກວມເອົາເຂດທີ່ດິນຊົນລະປະທານ ຢ່າງເດັດຂາດ, ທັງນີ້ແມ່ນປະຕິບັດຕາມເນື້ອໃນຂອງກົດໝາຍວ່າດ້ວຍຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012, ມາດຕາ 52, ຂໍ້ 13.
2. ໃຫ້ ກະຊວງກະສິກໍາ ແລະ ປ່າໄມ້ ສົມທົບກັບ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດໍາເນີນການສໍາຫຼວດ ແລະ ກໍານົດເຂດທີ່ດິນຊົນລະປະທານ ໂດຍມີການປັກຫຼັກໝາຍ ໃຫ້ສໍາເລັດໂດຍໄວ, ໂດຍໃຫ້ເອົາໃຈໃສ່ບາງບັນຫາທີ່ສໍາຄັນດັ່ງລຸ່ມນີ້:
   - 2.1. ສົມທົບກັບກະຊວງກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງຮີບຮ້ອນ ດໍາເນີນການສໍາຫຼວດ, ປັກຫລັກໝາຍ ແລະ ຂຶ້ນທະບຽນທີ່ດິນກະສິກໍາ ໃນເຂດທີ່ດິນຊົນລະປະທານ, ການສ້າງແຜນທີ່ ແລະ ປັກຫຼັກໝາຍເຂດທີ່ດິນຊົນລະປະທານ ຕ້ອງຕິດພັນກັບການຈັດສັນທີ່ດິນກະສິກໍາ ໃຫ້ເໝາະສົມແກ່ການປູກຝັງ ແລະ ການລ້ຽງສັດ ເພື່ອເຮັດໃຫ້ການນໍາໃຊ້ທີ່ດິນດັ່ງກ່າວ ມີປະສິດທິຜົນສູງສຸດ ແລະ ຮັບໃຊ້ການພັດທະນາແບບຍືນຍົງ.
   - 2.2. ສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ຄະນະຮັບຜິດຊອບຄຸ້ມຄອງ ແລະ ນໍາໃຊ້ທີ່ດິນເຂດຊົນລະປະທານ ເພື່ອຫັນເປັນຊົນລະກະເສດ ໂດຍມີການວາງແຜນໃນໄລຍະສັ້ນ, ກາງ ແລະ ຍາວ.
   - 2.3. ຈັດສົ່ງວິຊາການທີ່ກ່ຽວຂ້ອງ ສົມທົບກັບ ວິຊາການຂອງອົງການປົກຄອງທ້ອງຖິ່ນ ເພື່ອຈັດຕັ້ງເຜີຍແຜ່ແນະນໍາການນໍາໃຊ້ເຕັກນິກ, ເຕັກໂນໂລຊີໃໝ່ດ້ານກະສິກໍາ, ນໍາພາປະຊາຊົນເຮັດຕົວຈິງ ໂດຍມີການຈັດຕັ້ງການຜະລິດຕາມຮູບແບບຕ່າງໆ ທີ່ເໝາະສົມເຊັ່ນ: ເສດຖະກິດຄອບຄົວຂອງຊາວກະສິກໍາ, ກຸ່ມການຜະລິດ, ກຸ່ມນໍາໃຊ້ນໍ້າຊົນລະປະທານ, ກຸ່ມບໍລິການດ້ານເຕັກນິກກົນຈັກກະເສດ ແລະ ອື່ນໆ, ຕິດແໜ້ນກັບການສ້າງຊົນນະບົດໃໝ່; ດໍາເນີນການຝຶກອົບຮົມກັບທີ່ ຫຼື ນໍາພາປະຊາຊົນ ໄປຖອດຖອນບົດຮຽນຢູ່ພາຍໃນ ແລະ ຕ່າງປະເທດ ກ່ຽວກັບການຄຸ້ມຄອງນໍາໃຊ້ນໍ້າຊົນລະປະທານ ກໍ່ຄືການຈັດຕັ້ງການຜະລິດ ສ້າງຊົນນະບົດໃໝ່.
3. ໃຫ້ ກະຊວງ ກະສິກໍາ ແລະ ປ່າໄມ້ ສົມທົບກັບກະຊວງ ແຜນການ ແລະ ການລົງທຶນ, ກະຊວງ ການເງິນ ແລະ ແຂວງ ຄໍາມ່ວນ ຂຶ້ນແຜນ ແລະ ຈັດສັນງົບປະມານ ເພື່ອຈັດຕັ້ງປະຕິບັດໂຄງການຕາມລະບຽບການ ແລະ ກົດໝາຍ.
4. ໃຫ້ຄະນະຊີ້ນໍາໂຄງການຄໍ້າປະກັນສະບຽງອາຫານລະດັບຊາດ ຊີ້ນໍາການປະຕິບັດ ຄໍາສັ່ງສະບັບນີ້ ຢ່າງເຂັ້ມງວດ ຕາມພາລະບົດບາດຂອງຕົນ.
5. ໃຫ້ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ແລະ ເຈົ້າແຂວງໆ ຄໍາມ່ວນ ຄົ້ນຄວ້າ, ກໍາແໜ້ນເນື້ອໃນ ຄໍາສັ່ງສະບັບນີ້, ພ້ອມທັງເປັນເຈົ້າການຈັດຕັ້ງຜັນຂະຫຍາຍ ເປັນອັນລະອຽດໂດຍໄວ ແລະ ຊີ້ນໍາການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.
6. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

(ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ ★)

ທອງສິງ ທໍາມະວົງ